STAY SAFE MN

# ເຂົ້າຮັບການກວດ!

4/1/2021




## ໝາຍໃສ່ໃນປະຕິທິນຂອງທ່ານ ເພື່ອເຂົ້າຮັບການກວດຊອກຫາໂຄວິດ-19

- **ທຸກໆສອງອາທິດ:**
  ສະມາຊິກທຸກຄົນໃນຄອບຄົວຂອງທ່ານຄວນຈະເຂົ້າຮັບການກວດ ຖ້າທ່ານມີເດັກນ້ອຍທີ່ຮອດອາຍຸ-ເຂົ້າໂຮງຮຽນທີ່ກັບຄືນໄປຮຽນແບບຕົວຕໍ່ຕົວ.
- **ທຸກໆອາທິດ:**
  ສະມາຊິກທຸກຄົນໃນຄອບຄົວຂອງທ່ານຄວນຈະເຂົ້າຮັບການກວດ ຖ້າທ່ານມີເດັກນ້ອຍທີ່ຮອດ-ອາຍຸເຂົ້າໂຮງຮຽນທີ່ຈະເຂົ້າຮ່ວມ ໃນການຫຼິ້ນກິລາ, ເຂົ້າຮ່ວມກິດຈະກຳເສີມຫຼັງເລີກຮຽນ ຫຼື ກິດຈະກຳຫຼັກສູດພິເສດອື່ນໆ.

## ວິທີການເຂົ້າຮັບການກວດ

ເຂົ້າເບິ່ງສະຖານທີ່ກວດຫາໂຄວິດ-19 ຂອງຊຸມຊົນ ຫຼື ເຂົ້າຮັບການກວດຜ່ານຮ້ານຂາຍຢາທ້ອງຖິ່ນຂອງທ່ານ, ໂຮງໝໍ ຫຼື ຄຣີນິກ. ທ່ານຍັງສາມາດສັ່ງຊຸດອຸປະກອນການທົດສອບທີ່ເຮັດເອງໄດ້ທີ່ບ້ານໄດ້. ທາງເລືອກທັງໝົດແມ່ນໄວ, ງ່າຍ, ແລະ **ບໍ່ມີຄ່າໃຊ້ຈ່າຍ**. ຖ້າທ່ານເລືອກພາສາທີ່ບໍ່ແມ່ນພາສາອັງກິດ, ມີນາຍແປພາສາໃຫ້ທ່ານໂຕຕໍ່ໂຕ ຫຼື ມີການແປພາສາທາງໂທລະສັບໄວ້ໃຫ້ບໍລິການ.

ຮຽນຮູ້ເພີ່ມເຕີມທີ່ການກວດຫາໂຄວິດ-19 (www.health.state.mn.us/diseases/coronavirus/testsites/index.html).

## ໃຫ້ກວດຫາເຊື້ອເປັນປະຈຳເປັນ ຊຶ່ງເປັນສ່ວນໜຶ່ງໃນກິດຈະກຳປະຈຳວັນຂອງທ່ານ

ການກວດຫາເຊື້ອເປັນປະຈຳແມ່ນສິ່ງທີ່ດີທີ່ສຸດເພື່ອໃຫ້ແນ່ໃຈວ່າພວກເຮົາບໍ່ແຜ່ເຊື້ອໂຄວິດ-19. ນີ້ແມ່ນສິ່ງທີ່ທ່ານສາມາດເຮັດເພື່ອເຮັດໃຫ້ລາຍການທີ່ຕ້ອງເຮັດທີ່ສຳຄັນນີ້ງ່າຍຕໍ່ການທົດສອບ:

- ໝາຍໄວ້ໃນປະຕິທິນຂອງທ່ານ ເພື່ອເປັນການເຕືອນການທົດສອບຂອງທ່ານເປັນປະຈຳ ແລະ ໝາຍບ່ອນສະຖານທີ່ກວດເພື່ອໃຫ້ເຂົ້າເຖິງໄດ້ງ່າຍ.
- ເຮັດໃຫ້ການນັດໝາຍການກວດເຊື້ອເປັນສ່ວນໜຶ່ງໃນສິ່ງທີ່ທ່ານຕ້ອງເຮັດໃຫ້ສຳເລັດໃນວັນທ້າຍອາທິດ.
- ເຮັດໃຫ້ການນັດໝາຍການກວດເຊື້ອເປັນວັນຂອງຄອບຄົວ ແລະ ໃຊ້ເວລາຮ່ວມກັນ.

**ຈົ່ງໃສ່ຜ້າອັດປາກ.** **ລ້າງມືຂອງທ່ານ.** **ຢູ່ຫ່າງຈາກຄົນອື່ນ 6 ຟຸດ.** **ພັກຢູ່ເຮືອນ ຖ້າທ່ານຮູ້ສຶກເປັນໄຂ້.**

MINNESOTA

Minnesota Department of Health | health.mn.gov | 651-201-5000
625 Robert Street North PO Box 64975, St. Paul, MN 55164-0975
ຕິດຕໍ່ health.communications@state.mn.us ເພື່ອຂໍໃນຮູບແບບອື່ນ. (Lao)